ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONGTONGSAVAT RD , BAN PHONGTONGSAVAT, CHANTHABULY DISTRICT, VTE
OFFICE TEL: (85621) 415645, FAX / TEL: (85621) 262 984 , WEBSITE.SOUVANNY.COM

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ

ເລກທີ: 0229../ສອນ

ນະຄອນຫຼວງວຽງຈັນ,ວັນທີ 22 ກຸມພາ 2019

# ມະຕິ
# ກອງປະຊຸມສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ
# ຄັ້ງທີ 01 ປະຈຳປີ 2019, ວັນທີ 22/02/2019

ກອງປະຊຸມສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ ຄັ້ງທີ 01/2019 ໄດ້ເປີດຂຶ້ນໃນເວລາ 14:00 ໂມງ ຂອງວັນທີ 22 ກຸມພາ 2019 ທີ່ສຳນັກງານໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ ໂດຍເປັນປະທານຂອງ ທ່ານ ອຸ່ນ ຫຼ້າສຸກັນ, ປະທານສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ, ສະມາຊິກສະພາບໍລິຫານ ແລະ ຜູ້ທີ່ຖືກເຊີນເຂົ້າຮ່ວມ.

## ກອງປະຊຸມໄດ້ປຶກສາຫາລືບັນຫາຕ່າງໆພ້ອມໄດ້ມີມະຕິຕົກລົງ ຕາມລາຍລະອຽດລຸ່ມນີ້:

1. **ມະຕິ:** ເຫັນດີຮັບຮອງບົດລາຍງານກອງປະຊຸມສະພາບໍລິຫານໃນຄັ້ງທີ 02/2018.

2. **ມະຕິ:** ເຫັນດີນຳບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2018 ແລະ ຮ່າງບົດລາຍງານການເງິນຂອງ ບໍລິສັດ ປະຈຳປີ 2018 ໂດຍແຕ່ງຕັ້ງໃຫ້ ທ່ານ ພັນໂນລາ ສຸຄະບັນດິດ ເປັນຜູ້ປະສານງານກັບຜູ້ກວດສອບພາຍນອກ ຫາກຮ່າງບົດລາຍງານການເງິນຂອງບໍລິສັດມີການປ່ຽນແປງໃນສ່ວນທີ່ເປັນສາລະສຳຄັນແມ່ນໃຫ້ທ່ານ ພັນໂນລາ ສຸຄະບັນດິດ ເປັນຜູ້ແຈ້ງໃຫ້ສະພາບໍລິຫານຮັບຊາບອີກເທື່ອໜຶ່ງ ແຕ່ຫາກມີການແກ້ພຽງເລັກໜ້ອຍ ທີ່ບໍ່ເຮັດໃຫ້ບົດລາຍງານການເງິນມີການປ່ຽນແປງໃນສາລະສຳຄັນ ໃຫ້ຖືວ່າຮ່າງບົດລາຍງານການເງິນສະບັບດັ່ງກ່າວເປັນບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2018 ທີ່ຈະສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງຕໍ່ໄປ.

3. **ມະຕິ:** ເຫັນດີນຳແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2019 ແລະ ໃຫ້ນຳແຜນການດຳເນີນທຸລະກິດຂອງ ບໍລິສັດປະຈຳປີ 2019 ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ເພື່ອພິຈາລະນາ ແລະ ຮັບຮອງຕໍ່ໄປ.

4. **ມະຕິ:** ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ໃນປີ 2018 ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນໃນມື້ປິດປຶ້ມບັນຊີຜູ້ຖືຮຸ້ນ ເຊິ່ງມື້ດັ່ງກ່າວຈະໄດ້ກຳນົດຕໍ່ໄປໃນອາລະຫິ 8ໃນອັດຕາ 50 ສ່ວນຮ້ອຍຂອງກຳໄລສຸດທິພາຍຫຼັງຫັກຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງສະສົມ ຕາມນະໂຍບາຍການຈ່າຍເງິນປັນຜົນຂອງບໍລິສັດ ເຊິ່ງອັດຕາທີ່ແນ່ນອນ ແລະ ກຳນົດມື້ຈ່າຍເງິນປັນຜົນແມ່ນມອບໃຫ້ ຜູ້ອຳນວຍການໃຫຍ່ເປັນຜູ້ຕັດສິນໃຈ ແລະ ແຈ້ງໃຫ້ຜູ້ຖືຮຸ້ນຮັບຊາບ ຜ່ານຊ່ອງທາງສື່ສານຂອງຕະຫຼາດຫຼັກຊັບລາວ.

5. **ມະຕິ:** ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງ ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກຸ ເປີ້ສ໌ (ລາວ) ຈຳກັດຜູ້ດຽວ (PriceWaterHouseCoopers (Lao) Sole Company Limited) ເປັນຜູ້ກວດ ສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2019 ໂດຍມີຄ່າບໍລິການກວດສອບເປັນເງິນຈຳນວນ ບໍ່ກາຍ 40.000 ໂດ ລາສະຫະລັດ.

6. **ມະຕິ:** ເຫັນດີໃຫ້ສະເໜີແກ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ອະນຸມັດໃຫ້ເຫຼືອແຕ່ເງິນອຸດໜູນເຂົ້າຮ່ວມກອງ ປະຊຸມຂອງສະມາຊິກສະພາບໍລິຫານສະເພາະຜູ້ທີ່ເປັນສະມາຊິກອິດສະຫຼະ ຂອງບໍລິສັດ ດັ່ງນີ້:

1. ເງິນອຸດໜູນເຂົ້າຮ່ວມກອງປະຊຸມໃນແຕ່ລະເທື່ອ ສະເພາະຜູ້ທີ່ເປັນສະມາຊິກອິດສະຫຼະເທົ່ານັ້ນ
   - ປະທານສະພາບໍລິຫານ 3.000.000 ກີບ ຕໍ່ 1 ຄັ້ງ;
   - ຮອງປະທານສະພາບໍລິຫານ 2.000.000 ກີບ ຕໍ່ 1 ຄັ້ງ; ແລະ
   - ສະມາຊິກສະພາບໍລິຫານ 2.000.000 ກີບ ຕໍ່ 1 ຄັ້ງ.

7. **ມະຕິ:** ເຫັນດີໃຫ້ມີການຮຽກປະຊຸມສາມັນຜູ້ຖືຮຸ້ນ ໃນວັນທີ 05 ເມສາ 2019 ເວລາ 14.00 ໂມງ ຢູ່ທີ່ ຫ້ອງປະຊຸມ ໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ໂດຍມີວາລະ ເພື່ອພິຈາລະນາ ດັ່ງຕໍ່ໄປນີ້:
   - 7.1 ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2018 ແລະ ຮ່າງບົດ ລາຍງານການເງິນຂອງບໍລິສັດ ປະຈຳປີ 2018;
   - 7.2 ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2019;
   - 7.3 ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປີ 2018;
   - 7.4 ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດ ສອບບັນຊີພາຍນອກ ປີ 2019;
   - 7.5 ພິຈາລະນາການແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ຄົບວາລະ;
   - 7.6 ພິຈາລະນາ ແລະ ອະນຸມັດຄ່າຕອບແທນຂອງສະມາຊິກສະພາບໍລິຫານຂອງບໍລິສັດ.
   - 7.7 ເລື່ອງອື່ນໆ (ຖ້າມີ).

8. **ມະຕິ:** ເຫັນດີໃຫ້ກຳນົດເອົາວັນທີ 11 ມີນາ 2019 ເປັນມື້ປິດປຶ້ມບັນຊີຜູ້ຖືຮຸ້ນຂອງບໍລິສັດ ເພື່ອກຳນົດລາຍຊື່ຜູ້ຖືຮຸ້ນທີ່ ມີສິດເຂົ້າຮ່ວມປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 ແລະ ຮັບເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018

ກອງປະຊຸມໄດ້ປິດລົງເວລາ 16:30 ໂມງ ຂອງວັນດຽວກັນ.

**ປະທານສະພາບໍລິຫານ**

**ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ**

**ທ່ານ ອຸ່ນ ຫຼ້າສຸກັນ**